


## ປະຫວັດຄວາມເປັນມາຂອງຊົນເຜົ່າຢັ້ງ

ປະຫວັດຄວາມເປັນມາຂອງເຜົ່າຢັ້ງ ແມ່ນໄດ້ເຄື່ອນຍ້າຍມາຈາກພາກໃຕ້ຂອງ ສ ປ ຈີນ ລົງມາທາງ ປະເທດ ຫວຽດນາມ ແຂວງ ເຊີນລາ, ໄລເຈົາ, ລາວກາຍມາຕັ້ງຖິ່ນຖານບ້ານຊ່ອງຢູ່ບັນດາເມືອງ ຂອງແຂວງອຸດົມໄຊ.

ຊື່ເອີ້ນ: ເຂົາເຈົ້າເອງກໍ່ເອີ້ນຕົນເອງແມ່ນຊົນເຜົ່າຢັ້ງ, ຊົນເຜົ່າອື່ນໆ ກໍ່ເອີ້ນວ່າ: ຊົນເຜົ່າຢັ້ງ ແລະ ຊື່ທີ່ເຂົາເຈົ້າມັກ ກໍ່ແມ່ນຊົນເຜົ່າຢັ້ງ. ຄຳສັບທີ່ວ່າ ຢັ້ງ ມີຄວາມຫມາຍລະອຽດຈະແຈ້ງແມ່ນ ຢຸດ ຫຼື ເຊົາ.

ພາສາ: ຊົນເຜົ່າຢັ້ງ ມີພາສາປາກເວົ້າຂອງຊົນເຜົ່າຕົນເອງໄດ້ຈັດເຂົ້າຢູ່ໃນຫມວດພາສາ ລາວ-ໄຕ, ຖ້າຈະໄຈ້ແຍກ, ວິໄຈລະອຽດພາສາປາກເວົ້າ ຫຼື ສຳນຽງການປາກເວົ້າຄ້າຍຄືກັບ ສຳນຽງການປາກເວົ້າຂອງຊົນເຜົ່າລື້ ແຕ່ຫາກຕ່າງກັບ ຊົນເຜົ່າຢັ້ງ ບໍ່ມີຕົວຫນັງສືຂຽນຄື: ຊົນເຜົ່າລື້ ແລະ ຊົນເຜົ່າລາວ.

ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ-ສັງຄົມຂອງຊົນເຜົ່າຢັ້ງ: ຊົນເຜົ່າຢັ້ງ ຢູ່ແຂວງ ອຸດົມໄຊ ແມ່ນໄດ້ເຊື່ອຖື ແລະ ເຄົາລົບບູຊາບັນພະບູລຸດຂອງຕົນ ແລະ ສິ່ງສັກສິດທັງປວງເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ ແລະ ອື່ນໆ. ນອກຈາກ ນັ້ນ ເຜົ່າຢັ້ງຍັງມີພິທີກຳທາງຮີດຄອງໃນການຊອກຫາດິນບ່ອນຕັ້ງບ້ານ, ເຮືອນ, ພິທີກຳເວລາໃກ້ຈະດຳນາ, ພິທີກຳເຂົ້ານາໃກ້ຈະງາມເປັນບ່າວເປັນສາວ ແລະ ພິທີກຳທີ່ເປັນງານບຸນໃຫຍ່ ສຳຄັນທີ່ສຸດ ແມ່ນບຸນກິນຈຽງຂອງເຜົ່າຢັ້ງ ( ໃນເວລາດຽວກັນກັບເຜົ່າອາຄາ ແລະ ເຜົ່າໄຕດຳ ).

ລັກສະນະເຮືອນ: ຂອງເຜົ່າຢັ້ງຢູ່ ແຂວງອຸດົມໄຊ ແມ່ນປຸກສ້າງເຮືອນຮ້ານແບບເຮືອນຂອງເຜົ່າລາວ ແລະ ເຜົ່າລື້ ແຕ່ຂະຫນາດ ແລະ ການຈັດວາງໃນເຮືອນມີອັນແຕກຕ່າງກັນກັບເຜົ່າລາວ ແລະ ເຜົ່າລື້, ເຜົ່າຢັ້ງໃນເຮືອນ ມີຮ້ານຜີ ແລະ ມີຂໍ້ຫ້າມຂະ ລຳຫຼາຍຢ່າງເພາະເຜົ່າຢັ້ງເຊື່ອຖືບັນພະບູລຸດ ແລະ ສິ່ງສັກສິດມີການຄະລຳມີຂໍ້ຫ້າມ ຫຼາຍກ່ວາເຜົ່າລື້ ແລະ ເຜົ່າລາວ ຕົວຢ່າງ: ການລ່ວງລະເມີດເຂົ້າຫ້ອງນອນຂອງ ສະມາຊິກພາຍໃນເຮືອນ ຈະຖືກປັບ ໃໝ່ປົວແປ້ງຜີເຮືອນ ຫມູ 4 ກຳ 1 ໂຕ, ເຫຼົ້າຂາວ 1 ລິດ, ເຫຼົ້າໄຫ 1 ໄຫ ແລະ ອື່ນໆ.

ເຜົ່າຢັ້ງ ມີເຄື່ອງນຸ່ງຫົ່ມເອ້ຍ້ອງແຕກຕ່າງກັບຊົນເຜົ່າອື່ນ ໃນກຸ່ມພາສາປາກເວົ້າ ລາວ-ໄຕ ແລະ ເຜົ່າຢັ້ງມີຮີດຄອງປະ ເພນີໃນການແຕ່ງງານມີ 2 ລັກສະນະເຊັ່ນ: 1. ແຕ່ງງານຜ່ານຄວາມເຫັນດີເຫັນພ້ອມຂອງພໍ່ແມ່ທັງສອງຝ່າຍໄດ້ຕົກລົງ ປົງໃຈຊອກໃຫ້ຄູ່ບ່າວສາວຕ້ອງໄດ້ເອົາກັນ (ແບບບັງຄັບຂອງພໍ່ແມ່). 2. ຄູ່ບ່າວສາວຫາກໄດ້ພົບກັນຮັກມັກກັນແລ້ວສະເຫນີໃຫ້ພໍ່ແມ່ຕົນທັງສອງເບື້ອງສອງຝ່າຍຈຶ່ງແຕ່ງງານນຳກັນ. ແຕ່ເຫັນໄດ້ວ່າຂອດການແຕ່ງງານ ຂອງເຜົ່າຢັ້ງ ໄດ້ແຍກອອກເປັນຫຼາຍໆຂັ້ນຕອນທີ່ສຸດເຜົ່າຢັ້ງກໍ່ຄືເຜົ່າອື່ນໆ. ໃນກຸ່ມພາສາປາກເວົ້າລາວ-ໄຕ ແມ່ນປະຕິບັດລະບອບ ຜົວດຽວ-ເມຍດຽວ ແຕ່ໃນກໍລະນີມີການຢ່າຮ້າງກັນຕ້ອງໄດ້ຊອກຫາສາເຫດລະອຽດເບື້ອງຜົວຜິດ ຫຼື ເມຍຜິດ. ກໍລະນີຜົວຜິດ ແລະ ຂໍຢ່າຮ້າງເມຍຕ້ອງໄດ້ເສຍໃຫ້ເມຍ ແລະ ພີ່ນ້ອງທາງເມຍ 5 ໝັນຫົວໝາມ ແລະ ກໍລະນີເມຍເປັນຜູ້ຜິດທັງຂໍຢ່າຮ້າງຕ້ອງໄດ້ເສຍໃຫ້ຜົວຈຳນວນ 12 ໝັນຫົວຫມານ (ນີ້ແມ່ນ ຮີດຄອງໃນສະໄຫມກ່ອນພຸ້ນ).

ເຜົ່າຢັ້ງມີປະເພນີການສົ່ງສະການ: ມີຫຼາຍຂັ້ນຕອນທີ່ແຕກຕ່າງກັບຊົນເຜົ່າອື່ນໆ ໃນກຸ່ມພາສາປາກເວົ້າ ລາວ-ໄຕ ດ້ວຍການຂຸດຂຸມຝັງສົບຄົນຕາຍ, ເຜົ່າຢັ້ງມີຮີດຄອງປະເພນີການເກີດລູກຢູ່ໃນເຮືອນທີ່ງບ່ອນ ນອນຂອງຄູ່ຜົວ ເມຍ ແລ້ວຢູ່ກຳເຊິ່ງໜ້າກັບເຕົາໄຟ, ເວລາເກີດລູກມີແມ່ຂອງຜົວ ແລະ ແມ່ຂອງເມຍເປັນຜູ້ເບິ່ງແຍງຊ່ວຍເຫຼືອເປັນຢ່າງດີ ແລະ ຢູ່ກຳເດືອນຮອດຫນຶ່ງເດືອນ.

ດ້ານສິລະປະວັນນະຄະດີ: ເຜົ່າຢັ້ງບໍ່ມີກອນຂັບລຳເປັນຂອງເຜົ່າຕົນເອງ, ແຕ່ມີເຄື່ອງດົນຕີພື້ນເມືອງຂອງເຜົ່າ ຕົນເອງເຊັ່ນ: ສີຊໍ, ຄ້ອງ, ກອງຂັນ, ກະຈັບປີ່ ຍ້ອນວ່າ ເຜົ່າຢັ້ງເຊື່ອຖືບັນພະບູຣຸດຈຶ່ງມີໝໍດູ, ໝໍມໍ, ໝໍຜີ ແລະ ໝໍຢາ ພື້ນເມືອງເພື່ອເປັນທີ່ເພິ່ງທາງດ້ານຈິດໃຈຂອງຊາວບ້ານ.

ດ້ານເສດຖະກິດ: ຊົນເຜົ່າຢັ້ງມີອາຊີບຕົ້ນຕໍແມ່ນເຮັດນາປູກເຂົ້າຫນຽວ ແລະ ກໍ່ມີບາງບ້ານສະພາບທີ່ຕັ້ງບໍ່ອຳ ນວຍ ຈຶ່ງເຮັດໄຮ່, ເຮັດສວນ ປູກພືດທາດແປ້ງເປັນຕົ້ນແມ່ນ: ມັນ, ເຜືອກ, ສາລີ, ນອກຈາກນີ້ຍັງລ້ຽງສັດປະເພດຕ່າງໆ ເຜົ່າຢັ້ງທັງຜູ້ຊາຍ ແລະ ແມ່ຍິງແມ່ນມີຄວາມຊຳນານດ້ານຫັດຖະກຳຈັກສານ ຕ່ຳຫູກທໍ່ໄຫມ, ຕີເຫຼັກ ແລະ ອື່ນໆ. ເພື່ອເປັນການປະກອບສ່ວນເພີ່ມລາຍໄດ້ໃຫ້ແກ່ຄອບຄົວ.

ຊົນເຜົ່າຢັ້ງ: ກໍ່ແມ່ນອີກຊົນເຜົ່າຫນຶ່ງທີ່ຍັງຮັກສາຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງເຜົ່າຕົນໄວ້ ໄດ້ນອກນັ້ນຍັງມີການອານຸລັກ ແລະສົ່ງເສີມສິນລະປະວັນນະຄະດີພື້ນເມືອງຂອງເຜົ່າຕື່ມອີກ.

## History of the Yang Ethnic Group

Originally, the Yang people moved from the South of China to Xern La and Lai Chao, Vietnam. After many years, some of the Yang people decided to move from Vietnam to Laos, especially in Oudomxay province. Most of the Yang people are now in 3 different districts such as Namor, Beng and La district.

Name: They have been calling themselves“Yang” for years and other tribal people also call them “Yang”. Yang is their favorite name of all time and it means “stop”.

Language: They have their own speaking language and it’s identified in the linguistic type of Lao – Tai language. The speaking and accent is similar to Thai Lue ethnic group, but they have no linguistic writing pattern.

Belief, tradition and culture: The Yang people in Oudomxay province respect and believe in their own ancestors and other sacred supernatural things such as spirit (Ghost) of the father, spirit (Ghost) of the mother, spirit (Ghost) of the village and many others. When someone wants to build a new house, the construction area of the house is selected at the same time of the assessment ceremony in order to have a nice location. In addition, there are many different festivals and ceremonies within a year such as Yang New Year festival celebration, spiritual ceremony, ceremony on rice planting season. The Yang New Year is took place at the same time as Akha, Hor and Tai Dam ethnic group.

House: The house structure of the Yang people is as the same as the house of the Lao and Thai Lue ethnic group, but the interior decoration and design of the house is alittle bit different. A sacred altar is always built and placed on the appropriate wall in almost every house. And there are several prohibitive things that people are not allowed to do, as for example people are not allowed to enter the bedroom without the owner’s permission. In case of somebody entered someone’s bedroom he or she will be fined for the said fault, so it’s necessary to provide one pig, one liter of Lao whisky (Lao Lao), one jar of Lao alcohol, one chicken and others to the owner of the house in order to recover the said problem.

The traditional costume of the Yang people is totally different from the other tribal clothes, including the wedding dresses. There are 2 ways of getting married: 1) the life partner of the son or daughter is chosen by the parents – the son and daughter has to marry with the one they have chosen. 2) The boy and the girl fall in love and decide to get married – They have to ask permission from the parents of both sides about the marriage. The marriage of the Yang people consists of many steps. And they believe in one statement “One husband and one wife” this is what they have to be honest to each other. In the past, in case of a couple wants to divorce or separate, so both sides have to see what is the main problem they have and why? Who’s fault? In case of the husband wants to separate he has to pay 5 coins (Money) to the wife and if the wife wants to separate she has to pay around 12 coins (Money) to the husband.

Death: When someone dies, a funeral takes a few days with several steps in accordance with related religious practice. The corpse is always buried at the cemetery near the village.

Birth: Most of the Yang women always give birth at home and some experienced women are in charge of that for assistance. After birth, she has to stay at home for a month by sitting in front of the fireplace in order to make her body warm during that time. Moreover, she is not allowed to work hard and healthy food is necessary.

Literature: They have their own musical instruments, traditional singing, dancing, flute, and so on. The Yang people truly respect their ancestors for centuries. Generally, the persons that Yang people trust the most are fortune teller, shaman, and traditional physician in the village.

Economy: The main crops that Yang people prefer to plant are rice, corn, maize, sweet potato, and vegetables. In addition, animal rising is also one of the cash income generating activities for the family. Both Yang men and women are experienced in weaving, embroidery as well as knife making (blacksmith), so there are more opportunities for them to make more money for the family by running these local activities.